Australian Government

Department of Health

# ການສະໜັບ ສະໜູນ ຄວາມທຸກໂສກແລະຄວາມເຈັບປວດ ສຳລັບຜູ້ທີ່ໄດ້ຮັບຜົນກະທົບຈາກ COVID-19 ໃນຂະແໜງການດູແລຜູ້ສູງອາຍຸ.

ລັດຖະບານອອສເຕຣເລັຍ ກຳລັງໃຫ້ການບໍລິການດ້ານການເງິນທຶນເພື່ອສະໜັບສະໜູນຄວາມທຸກໂສກ, ການສູນເສັຍແລະຄວາມເຈັບປວດສຳລັບຂະແໜງ ການດູແລຜູ້ສູງອາຍຸ. ການບໍລິການດັ່ງກ່າວແມ່ນມີໃຫ້ສຳລັບຜູ້ທີ່ດູແລຜູ້ອາຍຸສູງທີ່ຢູ່ອາໄສ, ຜູ້ທີ່ໄດ້ຮັບການເບິ່ງແຍງຢູ່ເຮືອນ, ຄົນທີ່ພວກເຂົາຮັກແລະພະນັກງານດູແລຜູ້ສູງອາຍຸ. ທ່ານສາມາດໃຊ້ບໍລິການເຫຼົ່ານີ້ດ້ວຍຕົວທ່ານເອງ, ຫຼືແຈ້ງໃຫ້ຄົນທີ່ທ່ານຮັກແລະຊຸມຊົນຮູ້ກ່ຽວກັບບໍລິການເຫຼົ່ານີ້.

ບໍລິການເຫຼົ່ານີ້ແມ່ນຟຣີສຳລັບທຸກຄົນທີ່ຈະໃຊ້.

ອົງການຈັດຕັ້ງທັງໝົດ ນີ້ເຄົາລົບນັບຖືວັດທະນະທຳ, ສາດສະໜາ, ເອກະລັກແລະວິຖີຊີວິດຂອງຄົນເຮົາ. ຖ້າທ່ານຫຼືຄົນທີ່ທ່ານຮັກຕ້ອງການນາຍພາສາ, ໃຫ້ໂທຫາບໍລິການແປເອກະສານແລະ ນາຍພາສາ ຕາມໝາຍເລກ 131 450. ຂໍເອົາພາສາຂອງທ່ານ ແລະ ການບໍລິການທີ່ທ່ານຕ້ອງການໃຫ້ເຊື່ອມຕໍ່.

## ການສະໜັບ ສະໜູນ ຄວາມທຸກໂສກ ແລະ ການສູນເສັຍ

### ການໃຫ້ ຄຳປຶກສາທາງໂທລະສັບ:

ສູນຄວາມທຸກໂສກແລະຄວາມໂສກເສົ້າເນື່ອງຈາກການເສັຍຊີວິດ ແຫ່ງອອສເຕຣເລັຍ(The Australian Centre for Grief and Bereavement) ໃຫ້ຄວາມຊ່ວຍເຫລືອແກ່ພະນັກງານດູແລຜູ້ສູງອາຍຸ, ຜູ້ໃຫ້ບໍລິການ ການດູແລຜູ້ສູງອາຍຸ, ກຸ່ມສາດສະໜາ ແລະ ກຸ່ມຊຸມຊົນໃນການຊ່ວຍເຫຼືອ ຊຸມຊົນຂອງພວກເຂົາທີ່ມີຄວາມທຸກໂສກແລະການສູນເສັຍຍ້ອນ COVID-19. ຈົ່ງໂທລະສັບຫາໝາຍ ເລກ 1800 222 200 ເພື່ອຂໍຄຳແນະນຳ ກ່ຽວກັບວິທີຊ່ວຍຊຸມຊົນຂອງທ່ານ.

ເມື່ອທ່ານໂທ, ທ່ານສາມາດເວົ້າກັບພວກເຂົາກ່ຽວກັບສິ່ງທີ່ທ່ານຕ້ອງການເພື່ອສະໜັບສະໜູນ ທ່ານ ຫຼື ຄົນທີ່ທ່ານຮັກ. ນີ້ສາມາດປະກອບມີການໃຫ້ ຄຳ ປຶກສາແບບເປັນກຸ່ມ ຫຼື ການໃຫ້ ຄຳປຶກສາແບບ ຕົວ ຕໍ່ ຕົວ ກັບຜູ້ປະຕິບັດງານໂດຍຜ່ານທາງ telehealth (ໂດຍທາງໂທລະສັບ ຫຼື ຜ່ານທາງການປະຊຸມທາງວິດີໂອ), ຫຼື ດ້ວຍຕົວເອງ

ສູນຄວາມທຸກໂສກແລະຄວາມໂສກເສົ້າເນື່ອງຈາກການເສັຍຊີວິດ ແຫ່ງອອສເຕຣເລັຍ(The Australian Centre for Grief and Bereavement) ມີພະນັກງານປາກສອງພາສາທີ່ເຮັດວຽກຮ່ວມກັບລູກຄ້າທີ່ປາກພາສາອາຣາບິກ, ພາສາເຊັກ, ຟາຊີ, ຝຣັ່ງ, ອິຕາລີ, ຍີ່ປຸ່ນ, ມາລຕາ, ຊິນຮາລາ, ທາມິລ, ສະເປນ ແລະ ຢິດິສ. ຂໍເອົາພາສາຂອງທ່ານເມື່ອທ່ານໂທ. ສຳລັບພາສາອື່ນໆ, ໃຫ້ໂທຫາບໍລິການແປເອກະສານແລະນາຍພາສາ ກ່ອນຕາມໝາຍເລກ 131 450 ແລະ ຂໍໃຫ້ຕໍ່ຫາ ສູນຄວາມທຸກໂສກແລະຄວາມໂສກເສົ້າເນື່ອງຈາກການເສັຍຊີວິດ ແຫ່ງອອສເຕຣເລັຍ.

ນອກຈາກນີ້ແລ້ວ ສູນຄວາມທຸກໂສກແລະຄວາມໂສກເສົ້າເນື່ອງຈາກການເສັຍຊີວິດ ແຫ່ງອອສເຕຣເລັຍຍັງສະໜັບສະໜູນ ການໃຊ້ການແປພາສາມື ສຳລັບຜູ້ຫູໜວກ ແລະ ຜູ້ມີຄວາມພິການທາງການໄດ້ຍິນສຽງ.

## ການສະໜັບສະໜູນໂຣກສະໝອງເສື່ອມ

ການສະໜັບສະໜູນໂຣກສະໝອງເສື່ອມ ແຫ່ງອອສເຕຣເລັຍ ໃຫ້ການຊ່ວຍເຫຼືອຕະຫຼອດ 24 ຊົ່ວໂມງທົ່ວ ອອສເຕຣເລັຍ, 365 ວັນຕໍ່ປີ. ພວກເຂົາໃຫ້ ຄໍາແນະນໍາ ແລະ ຄໍາ ຊີ້ແນະ ສໍາລັບຜູ້ທີ່ດູແລຄົນທີ່ເປັນໂຣກສະໝອງເສື່ອມ. ຈົ່ງໂທຫາພວກເຂົາຕາມໝາຍເລກ **1800 699 799**. ຖ້າທ່ານ ຫຼື ຄົນທີ່ທ່ານຮັກຕ້ອງການນາຍພາສາ, ໃຫ້ໂທຫາບໍລິການແປເອກະສານແລະນາຍພາສາ ຕາມໝາຍເລກ **131 450** ແລະ ຂໍໃຫ້ຕໍ່ຫາ ການສະໜັບ ສະໜູນ ໂຣກສະໝອງເສື່ອມ.

## ການສົ່ງເສີມ:

ເຄືອຂ່າຍສົ່ງເສີມຜູ້ສູງອາຍຸ (The Older Persons Advocacy Network) ໃຫ້ບໍລິການສົ່ງເສີມການດູແລຜູ້ສູງອາຍຸທົ່ວອອສເຕຣເລັຍ. ຖ້າທ່ານມີບັນຫາກັບການບໍລິການດູແລຜູ້ສູງອາຍຸທີ່ທ່ານ ກໍາລັງໄດ້ຮັບ, ພວກເຂົາສາມາດຊ່ວຍທ່ານໄດ້. ເຄືອຂ່າຍສົ່ງເສີມ ຜູ້ສູງອາຍຸ ໃຫ້ ການສົ່ງເສີມ ທີ່ເປັນອິດສະຫຼະ, ເປັນຄວາມລັບ, ໃຫ້ຂໍ້ມູນຂ່າວສານແລະການສຶກສາແກ່ຜູ້ສູງອາຍຸ, ຄອບຄົວ ແລະ ຜູ້ຕາງໜ້າ. ໂທຫາພວກເຂົາທີ່ໝາຍເລກ **1800 700 600.**
ຖ້າທ່ານ ຫຼືຄົນທີ່ທ່ານຮັກຕ້ອງການນາຍພາສາ, ໃຫ້ໂທຫາ ບໍລິການ ແປເອກກະສານ ແລະນາຍພາສາ ທີ່ ເລກ **131 450** ແລະ ຂໍເອົາເຄືອຂ່າຍສົ່ງເສີມຜູ້ສູງອາຍຸ.

## ຂໍ້ມູນເພີ່ມເຕີມກ່ຽວກັບ COVID-19

ມັນເປັນສິ່ງ ສໍາຄັນທີ່ຈະຕ້ອງໄດ້ຮັບຂ່າວສານຜ່ານແຫຼ່ງຂ່າວທີ່ເປັນທາງການ. ເຂົ້າເບິ່ງທີ່ health.gov.au ຫຼື ໂທຫາສາຍດ່ວນ National Coronavirus Helpline ທີ່ໝາຍເລກ **1800 020 080**. ສໍາລັບ ບໍລິການ ການແປເອກະສານ ແລະ ນາຍພາສາ ໂທເລກ **131 450** ແລະ ຂໍເອົາເສາຍດ່ວນ National Coronavirus Helpline.